ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 172/ສປສສ

ນະຄອນຫຼວງວຽງຈັນ, ວັນທີ 6 / 6 /2013

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ການເກັບອາກອນຂອງລັດ ກ່ຽວກັບການພິຈາລະນາຄຳຮ້ອງຂໍທາງແພ່ງ

**ອີງຕາມ** ມາດຕາ 38 ຂໍ້ 7 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມະຕິຕົກລົງ ສະບັບເລກທີ 37/ຄປຈ, ລົງວັນທີ 6 ພຶດສະພາ 2011 ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສານປະຊາຊົນສູງສຸດ.

ຜ່ານມາສັງເກດເຫັນວ່າ ການພິຈາລະນາອາກອນຂອງລັດ ກ່ຽວກັບການຮ້ອງຂໍທາງແພ່ງ ຂອງສານປະຊາຊົນແຕ່ລະຂັ້ນຍັງບໍ່ທັນມີຄວາມເປັນເອກະພາບກັນ.

**ປະທານສານປະຊາຊົນສູງສຸດ ອອກຄຳແນະນຳ ດັ່ງນີ້:**

1. ອາກອນຂອງລັດກ່ຽວກັບການພິຈາລະນາຄຳຮ້ອງຂໍທາງແພ່ງ ທີ່ບໍ່ສາມາດຕີມູນຄ່າໄດ້ ແມ່ນໃຫ້ເກັບ 50.000 ກີບ ຄືກັນກັບຄະດີທີ່ບໍ່ມີມູນຄ່າ, ສ່ວນການຮ້ອງຂໍໃຫ້ສານຕັດສິນ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ ແມ່ນໃຫ້ເກັບ 2 % ຂອງມູນຄ່າການຮ້ອງຟ້ອງ ຕາມກົດໝາຍວ່າດ້ວຍຄ່າທຳນຽມສານ;
2. ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ໃຫ້ບັນດາ ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ວິຊາການ ທີ່ຂຶ້ນກັບສິດອຳນາດຂອງຕົນ ເພື່ອຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

**ປະທານສານປະຊາຊົນສູງສຸດ**

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ປະທານ, ຮອງປະທານ ສານປະຊາຊົນສູງສຸດ ທ່ານລະ 1 ສະບັບ (ເພື່ອລາຍງານ);
- ບັນດາຄະນະສານ ຂອງສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນບ່ອນລະ 1 ສະບັບ (ເພື່ອປະຕິບັດ);
- ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອຊາບ);
- ສຳເນົາໄວ້ 2 ສະບັບ.